ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
PetroTrade
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ:018./ປທລ/2026

ນະຄອນຫຼວງວຽງຈັນ, ວັນທີ: 03 ມິຖຸນາ 2026

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ

ບັນດາ ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ການແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 2/2026

- ອີງຕາມຂໍ້ຕົກລົງວ່າດ້ວຍ ການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມລະບຽບວ່າດ້ວຍ ການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມມະຕິສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 1/2026, ລົງວັນທີ 25 ກຸມພາ 2026.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບ ກ່ຽວກັບມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 2/2026 ໃນວັນທີ 03 ມິຖຸນາ 2026 ດັ່ງລາຍລະອຽດລຸ່ມນີ້:

1. ກຳນົດເອົາວັນທີ 16 ມິນາ 2026 ເປັນມື້ປິດປຶ້ມທະບຽນຜູ້ຖືຄອງຮຸ້ນ ເພື່ອກຳນົດສິດຜູ້ຖືຮຸ້ນທີ່ສົດເຂົ້າຮ່ວມກອງປະຊຸມສາມັນປະຈຳປີ 2025 ຕາມທີ່ໄດ້ເປີດເຜີຍໃນມະຕິກອງປະຊຸມສະພາບໍລິຫານ ໃນວັນທີ 26 ກຸມພາ 2026;
2. ກຳນົດວັນທີເປີດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ໃນວັນທີ 23 ມິຖຸນາ 2026 ເວລາ 09:00 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງ ວຽງຈັນ;
3. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ມີລາຍລະອຽດດັ່ງນີ້:

ວາລະທີ 1: ***ພິຈາລະນາ ແລະ*** *ຮັບຮອງເອົາ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024;*

ວາລະທີ 2: ***ພິຈາລະນາ ແລະ*** *ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2025 ແລະ ເອກະສານລາຍງານການເງິນ ທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2025;*

ວາລະທີ 3: ***ພິຈາລະນາ ແລະ*** *ຮັບຮອງ ບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2025 ອັນເນື່ອງມາຈາກບໍລິສັດ* ***ຂາດທຶນໃນຊຸມປີຜ່ານມາ****;*

ວາລະທີ 4: ***ພິຈາລະນາ ແລະ*** *ຮັບຮອງ ແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025;*

ວາລະທີ 5: ***ພິຈາລະນາ ແລະ ຮັບຮອງ*** *ການປັບປຸງກົດລະບຽບຂອງບໍລິສັດ (ປັບປຸງອັດຕາເບ້ຍລ້ຽງກອງປະຊຸມປະຈຳໄຕມາດຂອງ ສະມາຊິກສະພາບໍລິຫານ);*

ວາລະທີ 6: ***ພິຈາລະນາ ແລະ ຮັບຮອງ*** *ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouse Coopers (Lao) Sole Co., Ltd. ("PWC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2026 ບໍ່ເກີນ37.000 ໂດລາສະຫະລັດ.*

4. *ວາລະອື່ນໆ*

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ,

ປະທານສະພາບໍລິຫານ ອິດສະລະ

ບໍລິສັດ ປິໂຕຣລຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ສີລາ ວຽງແກ້ວ